JDB
ທະນາຄານຮ່ວມພັດທະນາ

| **Position ID:** | EXC_MDEV/ITD |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕໍາແໜ່ງ:** ພະນັກງານ ພັດທະນາ Application

**Position Name:** ***Mobile App Developer***

## ❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ພັດທະນາ Mobile App ແລະ Web App ແບບ cross-platform ດ້ວຍຄຸນນະພາບສູງ ແລະ ການຕອບສະໜອງທີ່ວ່ອງໄວ;
- ຂຽນ code ທີ່ສາມາດປັບຂະໜາດໄດ້, ຂະຫຍາຍໄດ້ ແລະ ດູແລຮັກສາງ່າຍ ພ້ອມທັງມີການທົດສອບ ແລະ ການຄຸ້ມຄອງ code ທີ່ດີ;
- ອອກແບບ UX/UI ແລະ Flow ຂອງ App;
- ເຮັດວຽກຮ່ວມກັບທີມພັດທະນາ Backend ເພື່ອຄົ້ນຄວ້າ ຫຼື ສົ່ງມອບ Solution, workflows ແລະ API specs ເພື່ອສະໜັບສະໜູນລະບົບ ທີ່ມີຂະໜາດ ຫຼື ຈໍານວນຜູ້ໃຊ້ຫຼາຍກວ່າລ້ານ Users ຂຶ້ນໄປ;
- ມີສ່ວນຮ່ວມ ຫຼື ການປະສານງານທີ່ດີ ກັບທີມງານພັດທະນາໂປຣແກຣມດ້ວຍກັນ ແລະ ຄົ້ນຄວ້າຊອກຫາສິ່ງໃໝ່ໆເປັນປະຈໍາ ເພື່ອນໍາມາສະເໜີເປັນແນວທາງໃນການພັດທະນາ.
- ຮ່ວມກັບທີມໃນການແກ້ໄຂບັນຫາ, ການອອກແບບທີ່ໂຄງສ້າງຊັບຊ້ອນ ແລະ ສິ່ງສໍາຄັນແມ່ນສ້າງຜະລິດຕະພັນທີ່ມີຄຸນນະພາບສູງ.
- ສ້າງເອກະສານ Software Specification;
- ສ້າງຄູ່ມືການປະຕິບັດວຽກ ກ່ຽວກັບວຽກງານທີ່ຕົນຮັບຜິດຊອບ.
- ປະຕິບັດວຽກງານອື່ນໆຕາມການມອບໝາຍ ຂອງຄະນະພະແນກໄອທີ ຫຼື ຄະນະອໍານວຍການທະນາຄານຮ່ວມພັດທະນາ.

## ❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕໍາແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
    - ວິສະວະກໍາໄອທີ;
    - ວິສະວະກໍາຄອມພິວເຕີ;
    - ວິທະຍາສາດຄອມພິວເຕີ ຫຼື ສາຂາທີ່ກ່ຽວຂ້ອງ.

## ❖ ກ່ຽວກັບຜູ້ສະໝັກ (About Applicant):

- ມີປະສົບການໃນການພັດທະນາ Mobile App ຢ່າງໜ້ອຍ 03 ປີ ດ້ວຍພາສາໂປຣແກຣມໃດໜຶ່ງ ຫຼື ຫຼາຍກວ່າ ເຊັ່ນ: Swift, Kotlin, React Native, Flutter, etc. ທັງໃນແບບ native and cross-platform apps.
- ມີຄວາມຮູ້ທີ່ກວ້າງຂວາງ ໃນການຂຽນແອັບມືຖື ພ້ອມມີແນວທາງປະຕິບັດ ແລະ ຮູ້ນໍາໃຊ້ເຄື່ອງມືຕ່າງໆໃນລະດັບດີ.
- ມີການຮຽນຮູ້ທີ່ໄວ ແລະ ສາມາດເຮັດວຽກເປັນທີມງານທີ່ດີ.
- ເປັນຄົນທີ່ມັກພັດທະນາຕົນເອງຢ່າງຕໍ່ເນື່ອງ, ໝັ່ນຊອກຮູ້ດ້ວຍຕົນເອງ ແລະ ແບ່ງປັນຄວາມຮູ້ໃຫ້ເພື່ອນຮ່ວມງານ.
- ມີປະສົບການເຮັດວຽກ ກັບບໍລິສັດ Startup ກ່ຽວກັບພັດທະນາໂປຣແກຣມ ຈະພິຈາລະນາເປັນພິເສດ.
- ມີທັດສະນະຄະຕິທີ່ດີ, ສາມາດແກ້ໄຂບັນຫາສະເພາະໜ້າໄດ້ດີ, ມີຄວາມສາມາດໃນການສື່ສານທີ່ດີ ແລະ ມັກຄວາມທ້າທາຍກັບສິ່ງໃໝ່ໆ.
- ມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ.